ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 028/ບຊລ

ນະຄອນຫຼວງວຽງຈັນ, ວັນທີ 02 APR 2021

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອໍານວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2 ປີ 2021

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 02 ປີ 2021 ວັນທີ 2 ເມສາ 2021 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະ ຮັບຮອງມື້ປິດປຶ້ມວັນທີ 12 ເມສາ 2021 ເພື່ອກໍານົດສິດຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ກໍານົດເອົາວັນທີ 30 ເມສາ 2021 ເວລາ 9,00 ໂມງ ເປັນມື້ຈັດກອງປະຊຸມ.
2. ພິຈາລະນາ ແລະ ຮັບຮອງບົດລາຍງານດໍາເນີນທຸລະກິດປະຈໍາປີ 2020 ຂອງບໍລິສັດ.
3. ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນປະຈໍາປີ 2020 ຂອງບໍລິສັດ.
4. ເຫັນດີວ່າຈ້າງບໍລິສັດກວດສອບ EY ເປັນບໍລິສັດກວດສອບພາຍນອກຂອງປີ 2021, ກໍານົດໄລຍະເວລາ 1 ປີ ລາຄາ 30,000 ໂດລາ/ປີ.
5. ພິຈາລະນາ ແລະ ຮັບຮອງວາລະກອງປະຊຸມຜູ້ຖືຮຸ້ນ ປະຈໍາປີ 2020 ເຊິ່ງມີລາຍລະອຽດດັ່ງນີ້:

ວາລະທີ 1 : ແຈ້ງຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີຜ່ານມາ.

ວາລະທີ 2 : ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2019

ວາລະທີ 3 : ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງ 1 ປີ 2020

ວາລະທີ 4 : ພິຈາລະນາ ແລະ ຮັບຮອງບົດລາຍງານວຽກງານການດໍາເນີນທຸລະກິດປະຈໍາປີ 2020

ວາລະທີ 5 : ພິຈາລະນາ ແລະ ຮັບຮອງບົດລາຍງານວຽກງານການເງິນປີ 2020 ແລະ ບໍ່ຈ່າຍເງິນປັນຜົນ

ຈາກຜົນການດຳເນີນທຸລະກິດ ປະຈຳປີ 2020 ເນື່ອງຈາກບໍລິສັດຂາດທຶນ.

ວາລະທີ 6 : ພິຈາລະນາ ແລະ ຮັບຮອງວ່າຈ້າງບໍລິສັດກວດສອບພາຍນອກ

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ບໍລິສັດ ຊີມັງລາວ ມະຫາຊົນ

ປະທານສະພາບໍລິຫານ

ຢາງຊຸນຢິງ